# ບົດຖະແຫຼງຂ່າວ

**ຂອງ** ທ່ານ ລັດຖະມົນຕີ ກະຊວງສາທາລະນະສຸກ,

ກ່ຽວກັບສະພາບການສະກັດກັ້ນ, **ຄວບຄຸມ ແລະ ແກ້ໄຂ** ການລະບາດຂອງ**ພະຍາດອັກເສບປອດທີ່ເກີດ ຈາກເຊື້ອຈຸລະໂລກສາຍພັນໃໝ່** COVID-19 ຢູ່ ສປປ ລາວ

**ປະຈຳວັນອັງຄານ**, **ວັນທີ 21 ກັນຍາ ປີ 2021**

ສະບາຍດີ **ພໍ່ແມ່, ພີ່ນ້ອງ ຊາວລາວ ໃນທົ່ວປະເທດ ທີ່ເຄົາລົບ ຮັກແພງ ທັງຫຼາຍ** ທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດຖະແຫຼງຂ່າວຂອງຄະນະສະເພາະກິດ, ມື້ນີ້ ເປັນວັນ**ອັງຄານ ວັນທີ 21 ກັນຍາ ປີ 2021** ເປັນມື້ຂຶ້ນ 15 ຄ່ຳເດືອນ 10 ລາວ ເປັນວັນບຸນປະເພນີທີ່ ເຂົ້າສະຫຼາກ ເຊິ່ງເປັນອີກມື້ໜຶ່ງທີ່ເປັນວັນບຸນ ອັນມີຄວາມໝາຍຄວາມສຳຄັນທາງພຸດທະສາດສະໜາ ຂອງຊາວລາວເຮົາ. ປົກກະຕິ ປະຊາຊົນລາວ ອອກມາທຳບຸນຕັກບາດ ເປັນຈຳນວນຫຼາຍ ແຕ່ວ່າມື້ນີ້

ເຫັນວ່າ ປະຊາຊົນພ້ອມກັນປະຕິບັດ ມາດຕະການ ທີ່ທາງຄະນະສະເພາະກິດວາງອອກໄດ້ດີ, ຈຳນວນຜູ້ໄປທຳບຸນຕັກບາດ ກໍ່ບໍ່ຫຼາຍ ແລະ ປະຕິບັດມາດຕະການຢ່າງເຄັ່ງຄັດ.

ຂ້າພະເຈົ້າ ປອ. ດຣ ບຸນແຝງ ພູມມະໄລສິດ ລັດຖະມົນຕີ ກະຊວງສາທາລະນະສຸກ, ທັງເປັນ ຮອງຫົວໜ້າຄະນະສະເພາະກິດຂັ້ນສູນກາງ ພ້ອມດ້ວຍ ດຣ. ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ ສປປ ລາວ, ທົ່ວໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ. ຕໍ່ໄປ ຂໍເຊີນທ່ານ ດຣ. ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່ ລາຍງານ ສະພາບຜູ້ຕິດເຊື້ອໂຄວິດ-19 ຢູ່ ສປປ ລາວ ແລະ ທົ່ວໂລກ:

**ສະບາຍດີ ພໍ່ແມ່, ພີ່ນ້ອງ ຊາວລາວ ໃນທົ່ວປະເທດ ທີ່ເຄົາລົບ ຮັກແພງ ທັງຫຼາຍ.**

ມາເຖິງປະຈຸບັນ**ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ,** ໂດຍລວມແລ້ວເຫັນວ່າ ການຕິດເຊື້ອຈາກກໍລະນີນຳເຂົ້າຂອງແຮງງານແມ່ນມີທ່າອ່ຽງຫຼຸດລົງ ແຕ່ການຕິດເຊື້ອໃນຊຸມຊົນແມ່ນເພີ່ມຂຶ້ນ

ຢ່າງຕໍ່ເນື່ອງຢູ່ຫຼາຍແຂວງ, ຖ້າສົມທຽບໃສ່ໃນໄລຍະດຽວກັນໃນ ເດືອນຜ່ານມາເຫັນວ່າອັດຕາການຕິດເຊື້ອໃນຊຸມຊົນແມ່ນເພີ່ມຂຶ້ນເຖິງ **72.79% (**ເດືອນກັນຍາ ມີ 2.191 ທຽບກັບເດືອນສິງຫາ 345 ກໍລະນີ**)**. ມາຮອດມື້ນີ້, ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ 19,730 **ຄົນ**, ເສຍຊີວິດສະສົມ **16** ຄົນ (ໃໝ່ 0) ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **4,596** ຄົນ.

**ສະເພາະວັນທີ 20 ກັນຍາ 2021,** ໄດ້ກວດວິເຄາະທັງໝົດ **6,508** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ທັງໝົດ **331** ຄົນ:

- **ກໍລະນີນຳເຂົ້າ ມີ 35 ຄົນ**: ຈາກ ແຂວງ ສະຫວັນນະເຂດ 10 ຄົນ, ຫຼວງພະບາງ 8 ຄົນ, ຄຳມ່ວນ 7 ຄົນ, ຈຳປາສັກ 5 ຄົນ, ນະຄອນຫຼວງວຽງຈັນ 3 ຄົນ ແລະ ສາລະວັນ 2 ຄົນ ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກຕ່າງປະເທດ ເຂົ້າມາຕາມຈຸດຜ່ານ ແດນສາກົນ.

- **ສໍາລັບ ການຕິດເຊື້ອໃນຊຸມຊົນ ມີ 296 ຄົນ ລາຍລະອຽດ ດັ່ງຕໍ່ໄປນີ້:**
  - **ສະຫວັນນະເຂດ 7 ຄົນ:**

- ພະນັກງານແພດ ມີ 02 ຄົນ (ເພດຊາຍ, ອາຍຸ 39 ປີ ເປັນທ່ານໝໍ ແລະ ເພດຍິງ ອາຍຸ 34 ປີ ເປັນພະຍາບານ) ເຮັດວຽກຢູ່ເມືອງພະລານໄຊ, ແຕ່ໄດ້ມາປະຈໍາການຢູ່ສູນອັບເກນ ໃນວັນທີ 9 ສິງຫາ 2021 ແລະ ອອກຈາກສູນໃນວັນທີ 2 ກັນຍາ 2021 ແລ້ວໄປກັກໂຕ ຢູ່ໂຮງແຮມ ແລະ ໃນວັນທີ່ 15 ກັນຍາ 2021 ໄດ້ກັບໄປເມືອງ ແລະ ໃນວັນທີ 19 ກັນຍາ 2021 ທັງສອງຄົນ ມີອາການໄຂ້ ແລະ ໄອ ຊື່ງກວດດ້ວຍ RDT ກໍ່ແມ່ນໃຫ້ຜົນບວກ ແລະ ມາກວດດ້ວຍ PCR ກໍ່ໃຫ້ຜົນບວກເຊັ່ນດຽວກັນ.

- ພະນັກງານຕຳຫລວດ ຢູ່ຄ້າຍຄຸມຂັງຫຼັກ ມີ 02 ກໍລະນີ (ກັກໂຕຢູ່ສູນຫ້ອງເມືອງ) ແລະ ນັກໂທດ ຢູ່ຄ້າຍຄຸມຂັງຫຼັກ 6 ມີ 01 ກໍລະນີ (ກວດຄັ້ງທີ່ 03)

- ມີ 01 ກໍລະນີ ທີ່ເປັນພະນັກງານບໍລິສັດເອກອນ ທີ່ໄດ້ພົວພັນໃກ້ຊິດກັບພະນັກງານທີ່ເຮັດວຽກ ບ່ອນດຽວກັນຕິດເຊື້ອ ທີ່ຂຶ້ນກັບສະຫວັນປາກ

- ມີ 01 ກໍລະນີ ເປັນຄົນຫລວງດ ຂັບລົດຂົນສົ່ງສິນຄ້າ

- **ຈຳປາສັກ 59 ຄົນ:**

  - ເມືອງບາຈຽງ 12 ຄົນ

  - ນະຄອນປາກເຊ 20 ຄົນ

  - ເມືອງປະທຸມພອນ 23

- ເມືອງ ໂພນທອງ (ສູນກັກໂຕ ເກົ່າເກົ່ງ) 01 ຄົນ

- **ນະຄອນຫຼວງ 176 ຄົນ**:

**1).** ກຸ່ມ ໂຮງງານ ອານພີ ລາວ (ເກັບຈາກ ຈາກໂຮງງານ **191** ຕົວຢ່າງ) ໃຫ້ຜົນບວກ **72** ຕຢ; **positive rate** ເທົ່າ ກັບ **37.6% (72/191).**

**2).** ຈຸດເກັບ ຕົວຢ່າງ ຈາກບຶງຂະຫຍອງ : ໃຫ້ຜົນບວກ **25** ຄົນ (ຕົວຢ່າງຄ້າງ **04**ຕົວຢ່າງ ຂໍກວດຄືນໃໝ່)

**3).** ໂຮງໝໍເຊດຖາທິລາດ ແລະ ໂຮງໝໍ ເດັກ (ກວດຢູ່ **IPL)** ໃຫ້ຜົນບວກ **19** ຄົນ (ໂຮງໝໍ ເດັກ **01** ແລະ ເສດຖາ **18)** ຄື:

- ຈາກ ເມືອງສີໂຄດຕະບອງ ມີ **05** ຄົນ ( **05**ບ້ານ)
- ເມືອງ ຈັນທະບູລີ ມີ **03** ຄົນ (ຈາກ **03** ບ້ານ)

- ເມືອງ ສີສັດຕານາກ ມີ 3 ຄົນ (02 ບ້ານ)

- ເມືອງຫາດຊາຍຟອງ 01 ຄົນ (ບ້ານສົມຫວັງໃຕ້)

- ເມືອງໄຊທານີ 4 ຄົນ ( ມີ 03 ບ້ານ)

- ເມືອງໄຊ ເສດຖາ ມີ 02 ຄົນ (02 ບ້ານ)

- ເມືອງ ນາຊາຍ ທອງ 01 (ບ້ານ ນາຄູນນ້ອຍ)

4) ຈຸດນໍ້ປາຍ ສີໂຄດ ແລະ ໂຮງໝໍມະໂຫສົດ (ກວດຢູ່ ລົມຣູ ມະໂຫສົດ) : ໃຫ້ຜົນບວກ 12 ຄົນ; 10 ຄົນ ຈາກຈຸດນໍ້ປາຍສີໂຄດ ແລະ 02 ຄົນ ຈາກ ໂຮງໝໍ ມະໂຫສົດ.

5). ເມືອງນາຊາຍທອງ (ທີມ1 ແລະ 2) ໃຫ້ຜົນບວກ 37ຄົນ ອັດຕາຜົນບວກ 25.8% (37/143); ກຸ່ມນີ້ແມ່ນ ເກັບຈາກກຸ່ມສໍາຜັດ C1 ທີ່ພົວພັນກັບ ໂຮງງານ ຕັດຫຍິບ ອັນພີລາວ ແລະ ໂຮງງານ ຕັດຫຍິບ ທີໂອ (ຊຶ່ງກ່ອນໜ້າ ນີ້ ແມ່ນ ມີແມ່ຄ້າ ຂາຍເຄື່ອງໜ້າໂຮງງານ ຕິດເຊື້ອ).

- **ຄຳມ່ວນ 28 ຄົນ:**

  - ທ່າແຂກ 24 ຕົວຢ່າງ
  - ຍົມະລາດ 2 ຕົວຢ່າງ
  - ເຊບັ້ງໄຟ 3 ຕົວຢ່າງ
  - ໜອງບົກ 4 ຕົວຢ່າງ
  - ຫີນບູນ 1 ຕົວຢ່າງ
  - ໄຊບົວທອງ 1 ຕົວຢ່າງ

- **ສາລະວັນ 3 ຄົນ**: (ບ້ານໜອງເຜີ້ງ, ບ້ານຫຼັກ ສອງ ແລະ ບ້ານນາເຫຼັກ ມີບ້ານລະ 01 ກໍລະນີ ແລະ ທັງໝົດເປັນພະນັກງານ ຊຶ່ງພັກໂຕຢູ່ບ້ານ ແລະ ໄດ້ເກັບຕົວຢ່າງເປັນຄັ້ງທີ່ 02 ໃນວັນທີ 18

ກັນຍາ 2021 ແລະ ຜົນກວດອອກທີ່ 20 ກັນຍາ 2021 ແລະ ໄດ້ສຳຜັດໃກ້ຊິດກັບພະນັກງານຕິດເຊື້ອທີ່ເຮັດວຽກບ່ອນດຽວກັນ.

- **ບໍ່ແກ້ວ 3 ຄົນ:** ຈາກເຂດເສດຖະກິດພິເສດ ແລະ ຄົນຈາກ ເມືອງຕົ້ນເຜີ້ງ.
- **ວຽງຈັນ 6 ຄົນ**: ເຈົ້າໜ້າທີ່ ຕຳຫລວດ ພ້ອມຄອບຄົວ ໄປຍາມພີ່ນ້ອງ ຢູ່ບ້ານໂພນຊູ, ເມືອງວັງວຽງ ແລະ ໃນວັນທີ 14 ກັນຍາ 2021 ພີ່ນ້ອງ ໄດ້ໂທມາແຈ້ງວ່າກວດພົບເຊື້ອ; ດັ່ງນັ້ນ, ໃນວັນທີ 19 ກັນຍາ 2021, ທັງໝົດ 06 ຄົນ ຈຶ່ງໄດ້ໄປເກັບຕົວຢ່າງ ແລະ ວັນທີ 20 ກັນຍາ 2021 ຜົນກວດອອກມາພົບເຊື້ອ.
- **ຫຼວງພະບາງ 6 ຄົນ:** ແມ່ນໄດ້ຈາກການລົງຄົ້ນຫາກໍລະນີ ສຳຜັດໃກ້ຊິດ
- **ຊຽງຂວາງ 8 ຄົນ:** ຈາກຊຸມຊົນ ເປັນກໍລະນີສຳຜັດຈາກຜູ້ຕິດເຊື້ອທີ່ລາຍງານກ່ອນໜ້ານີ້ (ມີຄອບຄົວ ແລະ ຜູ້ທີ່ມາຮ່ວມງານສົບ ທີ່ເດີນທາງ ໄປຈາກ ນະຄອນຫລວງວຽງຈັນ ແລະຈຳປາສັກ)

ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານ ທີ່ປິ່ນປົວທີ່ຖືກກຳນົດໄວ້.

- **ປະຈຸບັນ ທົ່ວປະເທດ ບ້ານທີ່ຍັງເປັນເຂດແດງ 119 ບ້ານ:**
  - ໃນນະຄອນຫຼວງ ມີ 54 ບ້ານ
  - ໃນແຂວງສະຫວັນນະເຂດ 23 ບ້ານ
  - ໃນແຂວງຄຳມ່ວນ ມີ 46 ບ້ານ
- ສຳລັບ **ບ້ານໃໝ່ທີ່ກຳນົດເປັນເຂດແດງ ໃນນະຄອນຫຼວງວຽງຈັນ ມີ 04 ບ້ານ** ຄື:

- ບ້ານ ໜອງທາໃຕ້, ເມືອງຈັນທະບູລີ
- ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບູລີ
- ບ້ານ ໂນນສະຫວ່າງ, ເມືອງ ໄຊເສດຖາ
- ບ້ານ ໜອງວຽງຄຳ, ເມືອງໄຊທານີ

- **ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19** ສຳລັບ ຢູ່**ນະຄອນຫຼວງວຽງຈັນແມ່ນມີ ສອງຈຸດ: 1) ຈຸດເກັບຕົວຢ່າງ ເດີ່ນກິລາໃນຮົ່ມ ບຶງຂະຫຍອງ, 2) ຈຸດເກັບຕົວຢ່າງ ໂຮງຮຽນມໍປາຍສີໂຄດ.** ເຊິ່ງທັງສອງບ່ອນເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ພ້ອມທັງ ມີແຜນຈະຂະຫຍາຍຈຸດເກັບສະຖານທີ່ໄປນອກຕົວເມືອງ ເພື່ອອຳນວຍຄວາມສະດວກໃຫ້ປະຊາຊົນ ແລະ ເກັບຕົວຢ່າງໄດ້ໄວຂຶ້ນ (ສ່ວນລາຍລະອຽດ ຈະແຈ້ງໃຫ້ບັນດາທ່ານຊາບໃນພາຍຫຼັງ).
- ສຳລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກຳນົດໄວ້ ຫຼື ທີມງານໜ່ວຍເຄື່ອນທີ່ ທີ່ລົງເກັບຕົວຢ່າງ ໃນເຂດທີ່ມີການລະບາດໃນຊຸມຊົນ.

➢ **ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ**

- ວັນທີ 20 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈຳນວນ ທັງໝົດ 1,480 ຄົນ.

- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **116** ສູນ ແລະ **55** ໂຮງແຮມ, ມີຜູ້ຈຳກັດບໍລິເວນ 6,818 ຄົນ.

<u>**ຕໍ່ໄປນີ້ ຂ້າພະເຈົ້າ ຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ ແລະ ປະເທດອ້ອມຂ້າງ:**</u>

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ 229,734,927 (373,550 ໃໝ່), ເສຍຊີວິດທັງໝົດ 4,711,481 (5,315 ໃໝ່), ປິ່ນປົວຫາຍດີ 206,402,780 (471,979 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ **ສະຫະລັດອາເມລິກາ, ອິນເດຍ** ແລະ **ບຣາຊິວ**.

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ **ປະເທດໄທ** ເຊິ່ງມີຜູ້ຕິດເຊື້ອໃໝ່ 12,709 ຄົນ ແລະ ເສຍຊີວິດໃນມື້ດຽວ 106 ຄົນ, ຮອງລົງມາແມ່ນ **ສສ ຫວຽດນາມ** ມີລາຍງານຜູ້ຕິດເຊື້ອໃໝ່ 8,681 ຄົນ ແລະ ເສຍຊີວິດໃນມື້ດຽວ 215 ຄົນ.

ຂໍຂອບໃຈ

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ!**

ຄືດັ່ງທີ່ພວກເຮົາຮູ້ນຳກັນ ສະພາບການລະບາດຂອງພະຍາດໂຄວິດ-19 ຢູ່ໃນ ສປປລາວ. ສຳລັບແຮງງານນຳເຂົ້າ ມີທ່າອ່ຽງຫຼຸດລົງ ແຕ່ຍັງມີຫຼາຍແຂວງ ການຕິດເຊື້ອໃນຊຸມຊົນມີທ່າອ່ຽງລະບາດເພີ່ມຂຶ້ນເປັນຕົ້ນ ແຂວງ ຈຳປາສັກ, ຄຳມ່ວນ ແລະ ນະຄອນຫຼວງວຽງຈັນ ແລະ ເຖິງວ່າ ບັນດາແຂວງເຫຼົ່ານັ້ນສາມາດຮັບມືກັບການລະບາດໄດ້ໃນລະດັບໜຶ່ງ ແຕ່ຍັງມີຄວາມສ່ຽງສູງທີ່ຈະແຜ່ລະບາດເປັນວົງກວ້າງໃນຊຸມຊົນ ແລະ ມີລັກສະນະແກ່ຍາວ. ໃນບາງແຂວງ ການລະບາດຢູ່ໃນລະດັບ 2 ແລ້ວ ແລະ ອາດຈະ

ກ້າວໄປສູ່ລະດັບ 3. ສະນັ້ນ, ເພື່ອສືບຕໍ່ຮັບມືກັບສະພາບການດັ່ງກ່າວ ລັດຖະບານ ກໍຄື ຄະນະສະເພາະກິດຂັ້ນຕ່າງໆ ໄດ້ປະເມີນຄວາມສ່ຽງແຕ່ລະໄລຍະ, ໄດ້ອອກແຈ້ງການ ແລະ ຄຳແນະນຳເພີ່ມເຕີມ ຫຼາຍສະບັບ ກ່ຽວກັບການຍົກລະດັບມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການ ລະບາດ ຂອງພະຍາດ COVID-19 ເພື່ອໃຫ້ຄະນະສະເພາະກິດແຕ່ລະຂັ້ນ ນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ໃນທ້ອງຖິ່ນຂອງຕົນ ຢ່າງເຂັ້ມງວດ ເຮັດໃຫ້ພວກເຮົາ ສາມາດຄວບຄຸມ ບໍ່ໃຫ້ມີການແຜ່ລະບາດໄປວົງກ້ວາງ ແລະ ແກ່ຍາວຕື່ມອີກ. ສະນັ້ນ, ຫຼາຍແຂວງກໍ່ໄດ້ ຜັນຂະຫຍາຍ ແລະ ມີມາດຕະການເພີ່ມຂຶ້ນ ດ້ວຍການລ໋ອກດາວ ແລະ ສຳລັບນະຄອນຫຼວງວຽງຈັນ ຫຼັງຈາກມີຄຳສັ່ງໃນການປິດນະຄອນຫຼວງ ຕາມຄຳສັ່ງເລກທີ 016/ຈວນ ແຕ່ວັນທີ 19-30 ກັນຍາ 2021 ເຫັນວ່າ ບຸກຄົນ, ນິຕິບຸກຄົນ ຫຼາຍພາກສ່ວນ ໄດ້ໃຫ້ຄວາມຮ່ວມມື ແລະ ປະຕິບັດ ຕາມມາດຕະການ ລ໋ອກດາວທີ່ຄະນະສະເພາະກິດໄດ້ວາງອອກ ເປັນຢ່າງດີ, ໄດ້ມີການຕັ້ງດ່ານ ຕາມສາຍທາງ ລະຫວ່າງບ້ານ, ລະຫ່ວາງເມືອງ ແລະ ລະຫວ່າງແຂວງ ເພື່ອກວດກາຄົນເຂົ້າ-ອອກ ຢ່າງເຂັ້ມງວດ. ນີ້ສະແດງໃຫ້ເຫັນ ເຖິງກ້ອນກຳລັງ ຄວາມສາມັກຄີ ການຮ່ວມມື ຈາກຫຼາຍພາກສ່ວນ ເພື່ອປະຕິບັດຄຳສັ່ງ ໃຫ້ປະກົດຜົນເປັນຈິງ ໂດວສະເພາະ ການຈຳກັດຂອບເຂດການແຜ່ເຊື້ອຂອງພະ ຍາດ ບໍ່ໃຫ້ແຜ່ກ້ວາງອອກ.

- ແຕ່ຍັງສັງເກດເຫັນບາງປະກົດການ ທີ່ກຸ່ມຄົນເປັນຈຳນວນຫຼວງຫຼາຍ ໄດ້ໄປອັ່ງອໍ ແລະ ແອອັດ ໂດຍສະເພາະແມ່ນຢູ່ຮ້ານຂາຍເຄື່ອງ, ມິນິມາກ ແລະ ອື່ນໆ, ປະກົດການນີ້ສະແດງໃຫ້ເຫັນວ່າ ປະຊາຊົນຕ້ອງການກຽມພ້ອມ ເຄື່ອງອຸປະໂພກ ແລະ ບໍລິໂພກ ລວມທັງ ຢາສາມັນປະຈຳບ້ານ ທີ່ຈຳເປັນຕ້ອງນຳໃຊ້ໃນການລ໋ອກດາວ, ແຕ່ວ່າການທີ່ຫຼາຍໆຄົນ ເຂົ້າໄປແອອັດຢູ່ບ່ອນດຽວ ແມ່ນ ອາດພາຕົນເອງເຂົ້າໄປຫາຄວາມສ່ຽງໄດ້ເຊັ່ນດຽວກັນ ເພາະຕົວເລກຜູ້ຕິດເຊື້ອໃນຊຸມຊົນ ໃນບ້ານເຮົາ ຍັງມີໃຫ້ເຫັນຢູ່ທຸກໆວັນ ແລະ ຄວາມສ່ຽງແມ່ນມີຢູ່ທຸກບ່ອນ.
- ມີຫຼາຍພາກສ່ວນຖາມວ່າ ພວກເຮົາໄດ້ຫຍັງແດ່ຈາກການລ໋ອກດາວ ປິດເມືອງ, ຢາກໃຫ້ບັນດາທ່ານ ເຂົ້າໃຈຄວາມໝາຍຄວາມສຳຄັນ ຂອງການປະຕິບັດ ຢູ່ເຮືອນເພື່ອຊາດ, ເພື່ອຕົນເອງ, ເພື່ອຄອບຄົວ ເພາະວ່າ ພະຍາດໄດ້ມີການພັດທະນາ ແລະ ປັບປ່ຽນພັນທຸກຳ ເຮັດໃຫ້ສາມາດຕິດຕໍ່ໄດ້ໄວ ແລະ

ງ່າຍ ຈາກຄົນນື່ງໄປສູ່ກຸ່ມຄົນ ໂດຍສະເພາະ ແມ່ນສາຍພັນເດວຕ້າ. ສິ່ງທີ່ໄດ້ຈາກການປິດການເຄື່ອນໄຫວກໍ່ຄື:

- ການປ້ອງກັນບໍ່ໃຫ້ເກີດການກະຈາຍຂອງເຊື້ອລຸກລາມ ຈົນຄວບຄຸມບໍ່ໄດ້
- ຕໍ່ມາ ແມ່ນ ຮັກສາສຸຂະພາບ, ຄວາມປອດໄພ ແລະ ຊີວິດໃຫ້ແກ່ປະຊາຊົນ
- ຫລຸດຜ່ອນຄວາມແອອັດ ແລະ ຫຼຸດຜ່ອນພາລະອັນໜັກໜ່ວງຂອງທີມແພດ, ພະຍາບານ, ເຈົ້າໜ້າທີ່ທີ່ຮັບຜິດຊອບ ສະຖານທີ່ກັກກັນ ແລະ ສະຖານທີ່ປິ່ນປົວຜູ້ຕິດເຊື້ອ.

ນັ້ນແມ່ນສິ່ງທີ່ໄດ້ ແລະ ຖ້າທຸກພາກສ່ວນໃນສັງຄົມ ພ້ອມໃຈກັນປະຕິບັດ ມາດຕະການທີ່ຄະນະສະເພາະກິດວາງອອກ ຢ່າງເຄັ່ງຄັດ ເຊັ່ນ: ບໍ່ອອກຈາກເຮືອນ ຖ້າບໍ່ຈຳເປັນ, ບໍ່ໂຮມຊຸມນຸມກັນ, ບໍ່ຊຸມແຊວກັນເປັນກຸ່ມ, ຫຼີກເວັ້ນການເດີນທາງໄປສະຖານທີ່ສ່ຽງ, ສະຖານທີ່ແອອັດ, ການອອກໄປຊື້ ເຄື່ອງອຸປະໂພກ-ບໍລິໂພກ ກໍ່ຄວນໄປຄັ້ງ-ສອງຄັ້ງຕໍ່ອາທິດ ແລະ ບໍ່ແອອັດໃນບ່ອນຂາຍເຄື່ອງ, ຮັກສາໄລຍະຫ່າງ,

ໃສ່ຜ້າປິດປາກ-ດັງ, ລ້າງມືເລື້ອຍໆ ດ້ວຍນໍ້າສະອາດໃສ່ສະບູ ຫຼື ເຈວລ້າງມືທີ່ມີທາດເຫຼົ້າ 70% ຂຶ້ນໄປ, ຮັກສາມາລະຍາດໃນການໄອ-ຈາມ, ອະນາໄມຂ້າເຊື້ອຈຸດທີ່ມີຄວາມສ່ຽງ ແລະ ອີກຢ່າງໜຶ່ງທີ່ສຳຄັນ ກໍ່ຄື ການໄປຮັບວັກຊີນ ເພື່ອສ້າງພູມຄຸ້ມກັນໝູ່ ເຊິ່ງສາມາດປ້ອງກັນ, ຫຼຸດຜ່ອນຄວາມຮຸນແຮງຂອງພະຍາດ ແລະ ການເສຍຊີວິດໄດ້;

- ຄຽງຄູ່ກັນກັບ ການປະຕິບັດມາດຕາການປ້ອງກັນຕົນເອງ, ປ້ອງກັນຊຸມຊົນ ທີມງານກໍ່ພ້ອມພຽງກັນເພີ່ມທະວີເຝົ້າລະວັງຢູ່ຕາມສະຖານທີ່ສ່ຽງຕ່າງໆ, ເພີ່ມການເກັບ-ກວດຕົວຢ່າງ ໃຫ້ຫຼາຍຂຶ້ນ, ໄວຂຶ້ນຊອກຄົ້ນຫາຜູ້ສຳຜັດໃກ້ຊິດຢ່າງເລັ່ງດ່ວນ, ພ້ອມທັງກະກຽມ ສະຖານທີ່ກັກກັນ, ສະຖານທີ່ປິ່ນປົວ ໃຫ້ເໝາະສົມ ແລະ ພຽງພໍ ກັບຄວາມຕ້ອງການ, ທັງໝົດແມ່ນ ເພື່ອສະກັດກັ້ນການລະບາດບໍ່ໃຫ້ຂະຫຍາຍເປັນວົງກວ້າງ.

**ພໍ່ແມ່ ພີ່ນ້ອງ ທີ່ຮັກແພງທັງຫຼາຍ!**

- ຕໍ່ໜ້າສະພາບການດັ່ງກ່າວ ລັດຖະບານ ຈະປະເມີນສະພາບການເປັນແຕ່ລະໄລຍະ ແລະ ອອກມາດຕະການຢ່າງເໝາະສົມ, ຫຼັງຈາກ ການລ໋ອກດາວຜ່ານໄປແລ້ວ ຂໍແຈ້ງໃຫ້ບັນດາທ່ານ ຮີບຮ້ອນສັກວັກຊີນ ໃຫ້ພົນລະເມືອງ ສ່ວນຫຼາຍ ໄດ້ຮັບພູມຄຸ້ມກັນໝູ່ ແລະ ມີອັດຕາປົກຄຸມໄດ້ຕາມຄາດໝາຍ ລວມທັງຜູ້ມີອາຍຸ 17 ປີ, ແມ່ຍິງຖືພາ 12 ໄດ້ອາທິດຂຶ້ນໄປ ໃນຕໍ່ໜ້າ ຈະມີແຜນສັກໃຫ້ກຸ່ມອາຍຸ 12-17 ເພື່ອໃຫ້ສາມາດເປີດການຮຽນ-ການສອນໄດ້. ປັດຈຸບັນ ລັດຖະບານກໍ່ກຳລັງຈັດຫາວັກຊີນໃຫ້ພຽງພໍເພື່ອສະໜອງໃຫ້ກຸ່ມຄົນດັ່ງກ່າວ, ດັ່ງນັ້ນ ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງບັນດາທ່ານ ທີ່ຢູ່ໃນກຸ່ມເປົ້າໝາຍບູລິມະສິດນັ້ນ ຈົ່ງພ້ອມກັນໄປຮັບການສັກວັກຊີນ ຢ່າງຮີບດ່ວນ ເພື່ອຫຼຸດຜ່ອນການລະບາດຂອງພະຍາດ COVID-19 ຢູ່ປະເທດເຮົາ.
- ໃນໄລຍະຜ່ານມາ, ຍ້ອນມີການຮ່ວມມື ຮ່ວມແຮງ ຮ່ວມໃຈ ຢ່າງຫ້າວຫັນ ຂອງພໍ່ແມ່ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ, ມີການສະໜັບສະໜູນຊ່ວຍເຫຼືອ ຈາກບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ, ມີຄວາມເປັນເອກະພາບສູງ ແລະ ມາດຕະການຢ່າງເຂັ້ມງວດ ແຕ່ຫົວທີ່ຂອງລັດຖະບານ ຈຶ່ງເຮັດໃຫ້ປະເທດເຮົາ ສາມາດຈຳກັດການລະບາດຂອງພະຍາດ COVID-19 ທີ່ຜ່ານມາ.

- ຂ້າພະເຈົ້າ ຂໍຍ້ອງຍໍຊົມເຊີຍຕໍ່ກັບການປະຕິບັດໜ້າທີ່ຢ່າງໜັກໜ່ວງ ແລະ ປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງຂອງ ທຸກຄົນ, ທຸກພາກສ່ວນນັບຕັ້ງແຕ່ພະນັກງານແພດໝໍທຸກຂັ້ນ, ທຸກລະດັບ, ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ໜ່ວຍງານໂຄສະນາປະຊາສຳພັນ, ສື່ມວນຊົນ, ແລະ ອົງການທີ່ກ່ຽວຂ້ອງຕ່າງໆທີ່ໄດ້ສຸມທຸກເຫື່ອແຮງໃສ່ການປ້ອງກັນການລະບາດຂອງພະຍາດໂຄວິດ-19 ຢ່າງບໍ່ຮູ້ອິດຮູ້ເມື່ອຍ, ຂໍໃຫ້ທຸກຄົນ ຈົ່ງສືບຕໍ່ພາລະກິດອັນໜັກໜ່ວງນີ້ໄປພ້ອມໆກັນ ແລະ ຂ້າພະເຈົ້າຫວັງວ່າພວກເຮົາຈະສາມາດສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ໃນ ສປປ ລາວໃຫ້ໄດ້ໃນອະນາຄົດ ອັນໃກ້ນີ້.
- ສຸດທ້າຍນີ້, ຮຽກຮ້ອງໃຫ້ທຸກພາກສ່ວນໃນສັງຄົມ ສືບຕໍ່ຮ່ວມແຮງຮ່ວມໃຈກັນ ປະຕິບັດມາດຕະການທີ່ຄະນະ ສະເພາະກິດວາງອອກ ດ້ວຍຄວາມຮັບຜິດຊອບສູງ ເພື່ອຮັບປະກັນ ໃຫ້ປະເທດລາວ ແລະ ພວກເຮົາທຸກຄົນ ພ້ອມກັນຜ່ານຜ່າວິກິດການລະບາດຂອງພະຍາດ COVID-19 ໄປດ້ວຍດີ.

**ມາຮອດນີ້ ການຖະແຫຼງຂ່າວປະຈຳວັນທີ 21 ກັນຍາ 2021 ໄດ້ສິ້ນສຸດລົງ**

**ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານ ທີ່ໄດ້ຕິດຕາມ.**

**ຂໍຂອບໃຈ**